**ວິທີໄປເອົາຢາຂອງທ່ານກຳລັງປ່ຽນແປງໃໝ່**
**ຖ້າທ່ານຕ້ອງການຄວາມຊ່ວຍເຫລືອ**
**ໃຫ້ໂທຣະສັບຫາ 1-800-MEDICARE * ຜູ້ໃຊ້ເຄື່ອງຊ່ວຍຟັງໃຫ້ໂທຣະສັບຫາ 1-877-486-2048**
**ຫລືຜູ້ໃຫ້ຄຳປຶກສາຂອງ HICAP ທີ່ເລກ 1-800-434-0222**

ເຣີ່ມຕົ້ນແຕ່ວັນທີ່ 1 ມົກະຣາ 2006 ນີ້ເປັນຕົ້ນໄປ, ຈະມີໂຄງການເອົາຢາທີ່ທ່ານໝໍສັ່ງຂອງ Medicare ເກີດຂື້ນ. ໂຄງການໃໝ່ນີ້ຈະມີຜົນກະທົບຕໍ່ຜູ້ໄດ້ຮັບ Medi-Cal ທຸກຄົນຊຶ່ງກໍໄດ້ຮັບ Medicare ນຳອີກ. Medicare ຈະເປັນຜູ້ຈ່າຍຄ່າຢາປົວພະຍາດທີ່ທ່ານໝໍສັ່ງເປັນສ່ວນໃຫຍ່, ບໍ່ແມ່ນ *Medi-Cal.* ຖ້າຫາກທ່ານຢູ່ໃນໂຄງການ Medicare HMO ທີ່ໃຫ້ຜົນປະໂຍດດ້ານຢາປົວພະຍາດ, ທ່ານກໍຍັງຈະໄດ້ຮັບຢາປົວພະຍາດທີ່ທ່ານໝໍສັ່ງໃຫ້ຈາກ HMO ຕໍ່ໄປ. ຖ້າຫາກທ່ານບໍ່ຢູ່ໃນໂຄງການ Medicare HMO ທີ່ໃຫ້ຜົນປະໂຍດດ້ານຢາປົວພະຍາດ, Medicare ກໍຈະສົ່ງຈົດໝາຍມາຫາທ່ານໃນເດືອນພຶດສະຈິກາເພື່ອບອກໃຫ້ທ່ານຊາບເຖິງຊື່ຂອງແຜນການເອົາຢາປົວພະຍາດຂອງທ່ານ. ຖ້າຫາກທ່ານບໍ່ມັກແຜນການນີ້, ທ່ານກໍມີສິດເລືອກເອົາອັນໃໝ່ໄດ້. ໃຫ້ໂອ້ລົມກັບທ່ານໝໍຫລືເພສັດຊະກອນ (ທ່ານໝໍຈ່າຍຢາ) ຂອງທ່ານກ່ຽວກັບແຜນການໃດຈະຖືກຕ້ອງສຳຫລັບທ່ານ. ຈົ່ງເກັບຮັກສາຈົດໝາຍສະບັບນີ້ ແລະຈົດໝາຍທີ່ຈະສົ່ງມາໃນອະນາຄົດກ່ຽວກັບແຜນການຢາປົວພະຍາດຂອງທ່ານໄວ້ເພື່ອໃຊ້ອ້າງອີງ. ຖ້າຫາກວ່າໃນປະຈຸບັນນີ້ທ່ານເປັນສະມາຊິກຂອງແຜນການບໍຣິຫານການປິ່ນປົວຂອງ Medi-Cal ຢູ່ ຫລືແຜນການຣວມສຳຫລັບປິ່ນປົວຜູ້ເຖົ້າ [Program of All Inclusive Care for the Elderly (PACE)], ທ່ານກໍຈະໄດ້ຮັບຂ່າວສານເພີ່ມເຕີມອີກຈາກແຜນການສຸຂະພາບຂອງທ່ານເຊັ່ນດຽວກັບຈາກຣັດແຄລິຟໍເນັຍ.

LAOTIAN